ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 03642/ກພສ

ນະຄອນຫຼວງວຽງຈັນ, ວັນທີ 09 JUL 2018

# ແຈ້ງການ

ເຖິງ: ກອງຄຸ້ມຄອງພາສີ V ( ດ່ານພາສີສາກົນຂົວມິດຕະພາບ I ).

ເລື່ອງ: **ການທົດລອງຈັດຕັ້ງປະຕິບັດການຮັບແຈ້ງພາສີລ່ວງໜ້າກ່ອນສິນຄ້າ, ເຄື່ອງຂອງ ມາຮອດດ່ານພາສີຊາຍແດນ ຢູ່ທີ່ ດ່ານພາສີສາກົນຂົວມິດຕະພາບ I ສໍາລັບ ບໍລິສັດ ເບຍລາວ ຈໍາກັດ ແລະ ບໍລິສັດ ພູເບ້ຍມາຍນິງ ຈໍາກັດ.**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20/12/2011 ແລະ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24/12/2014;
- ອີງຕາມ ໃບສະເໜີຂອງ ບໍລິສັດ ເບຍລາວ ຈໍາກັດ ສະບັບເລກທີ 0891/ບລ, ລົງວັນທີ 29/03/2018;
- ອີງຕາມ ຜົນຂອງກອງປະຊຸມປຶກສາຫາລືຂອງຄະນະວິຊາການກົມພາສີ ຮ່ວມກັບ ກອງຄຸ້ມຄອງພາສີ, ດ່ານພາສີສາກົນຂົວມິດຕະພາບ I, ບໍລິສັດ ເບຍລາວ ຈໍາກັດ ແລະ ບໍລິສັດ ພູເບ້ຍມາຍນິງ ຈໍາກັດ ຄັ້ງວັນທີ 30/05/2018;
- ອີງຕາມ ບົດລາຍງານຂອງພະແນກນິຕິກໍາ ສະບັບເລກທີ 05570/ພນກ, ລົງວັນທີ 27/06/2018.

ເພື່ອເປັນການອໍານວຍຄວາມສະດວກທາງດ້ານການຄ້າ, ກົມພາສີ ເຫັນດີໃຫ້ຈັດຕັ້ງປະຕິບັດການທົດລອງການຮັບແຈ້ງພາສີລ່ວງໜ້າກ່ອນສິນຄ້າ,ເຄື່ອງຂອງມາຮອດດ່ານພາສີຊາຍແດນ ສໍາລັບ 02 ບໍລິສັດ ຄື ບໍລິສັດ ເບຍລາວ ຈໍາກັດ ແລະ ບໍລິສັດ ພູເບ້ຍມາຍນິງ ຈໍາກັດ, ໂດຍໃຫ້ປະຕິບັດດັ່ງນີ້:

1. ອະນຸຍາດໃຫ້ສອງບໍລິສັດຂ້າງເທິງແຈ້ງພາສີເປັນລາຍລະອຽດລ່ວງໜ້າກ່ອນການມາຮອດຂອງສິນຄ້າ, ເຄື່ອງຂອງທີ່ດ່ານພາສີຊາຍແດນ ໂດຍອີງໃສ່ບັນດາເອກະສານປະກອບ ຄື: ໃບແຈ້ງລາຄາ (ອິນວອຍ), ໃບຫຸ້ມຫໍ່ສິນຄ້າ (ແພັກກິ້ງລິສ) ແລະ ໃບອະນຸຍາດຈາກຂະແໜງການກ່ຽວຂ້ອງ (ຖ້າມີ). ສໍາລັບເອກະສານຂົນສົ່ງສິນຄ້າ ຫຼື Bill of Ladding (B/L) ຫຼື ໃບ ສບ, ພາຍຫຼັງທີ່ລົດຂົນສົ່ງສິນຄ້າມາຮອດດ່ານພາສີຊາຍແດນແລ້ວ ໃຫ້ນໍາເອົາ ເອກະສານຂົນສົ່ງສິນຄ້າສະບັບຕົ້ນ ທີ່ໄດ້ຮັບການຢັ້ງຢືນຈາກເຈົ້າໜ້າທີ່ພາສີປະຈໍາດ່ານມາຄັດຕິດໃສ່ ໃບແຈ້ງພາສີເປັນລາຍລະອຽດ ຈຶ່ງຈະອະນຸຍາດໃຫ້ດໍາເນີນການກວດກາປ່ອຍສິນຄ້າຕົວຈິງ.

2. ກ່ອນຈະດໍາເນີນການທົດລອງການຮັບແຈ້ງພາສີລ່ວງໜ້າດັ່ງກ່າວ, ໃຫ້ກອງຄຸ້ມຄອງພາສີ V ຊີ້ນໍາ ດ່ານພາສີສາກົນຂົວມິດຕະພາບ I ເຮັດບົດບັນທຶກສັນຍາກັບ ບໍລິສັດ ເບຍລາວ ຈໍາກັດ ແລະ ບໍລິສັດ ພູເບ້ຍມາຍນິງ ຈໍາກັ ໂດຍລະບຸເນື້ອໃນໃຫ້ບໍລິສັດຮັບປະກັນຄວາມຖືກຕ້ອງຂອງບັນດາຂໍ້ມູນໃນການແຈ້ງພາສີເປັນລາຍລະອຽດ ເຊັ່ນ: ມູນຄ່າແຈ້ງພາສີ, ລະຫັດສິນຄ້າ, ຈໍານວນ, ຂະໜາດ, ນໍ້າໜັກ, ປະເທດຜະລິດ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ ແລະ ຂໍ້ມູນເຫຼົ່ານັ້ນຈະຕ້ອງສອດຄ່ອງກັບລາຍລະອຽດໃນເອກະສານຂົນສົ່ງສິນຄ້າ. ໃນກໍລະນີກວດພົບພາຍຫຼັງວ່າບັນດາຂໍ້ມູນດັ່ງກ່າວບໍ່ຖືກຕ້ອງຕາມຄວາມເປັນຈິງ ບໍລິສັດຜູ້ແຈ້ງພາສີ ຈະຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

3. ການທົດລອງຈັດຕັ້ງປະຕິບັດການຮັບແຈ້ງພາສີລ່ວງໜ້າຕາມແຈ້ງການສະບັບນີ້ ມີກຳນົດ **03** (ສາມ) ເດືອນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ພາຍຫຼັງຄົບກຳນົດເວລາດັ່ງກ່າວ, ມອບໃຫ້ກອງຄຸ້ມຄອງພາສີ V ແລະ ດ່ານພາສີສາກົນຂົວມິດຕະພາບ I ຮ່ວມກັນປະເມີນຜົນການຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ກົມພາສີຊາບພາຍໃນ 10 (ສິບ) ວັນລັດຖະການ.

4. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຄວາມຫຍຸ້ງຍາກ ໃຫ້ລາຍງານກົມພາສີທັນທີເພື່ອມີທິດຊີ້ນຳໃນການຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

**<u>ບ່ອນນຳສົ່ງ:</u>**

- ກອງຄຸ້ມຄອງພາສີ V 01 ສະບັບ;
- ສຳເນົາເກັບມ້ຽນ 01 ສະບັບ